ສາມາດອອກຂ່າວໄດ້ທັນທີ

# ປະເທດອົດສະຕຣາລີ, ປະເທດເຢຍລະມັນ, ປະເທດສະວິດເຊີແລນ ຈະໃຫ້ການຊ່ວຍເຫຼືອ ມູນຄ່າ ເກືອບ 13 ລ້ານໂດລາສະຫະລັດ ເພື່ອປັບປຸງ ສະພາບການລວມຂອງ ອ່າງແມ່ນ້ຳຂອງ

**ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 24 ມິຖຸນາ 2021** – ໃນວັນນີ້ ປະເທດອົດສະຕຣາລີ, ປະເທດເຢຍລະມັນ ແລະ ປະເທດສະວິດເຊີແລນ ໄດ້ໃຫ້ຄຳໝັ້ນສັນຍາ ທີ່ຈະສະໜອງທຶນ ເກືອບຮອດ 13 ລ້ານໂດລາສະຫະລັດ ໃຫ້ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ເພື່ອຊ່ວຍປະເທດກຳປູເຈຍ, ສປປ ລາວ, ປະເທດໄທ ແລະ ປະເທດຫວຽດນາມ ຕອບໂຕ້ກັບບັນຫາທ້າທາຍ ພ້ອມທັງປົກປ້ອງລະບົບນິເວດຂອງ ແມ່ນ້ຳຂອງ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.

ການປະກອບສ່ວນນີ້ ແມ່ນເປັນໄປຕາມ ທິດທາງໃໝ່ຂອງບັນດາຄູ່ຮ່ວມພັດທະນາ ທີ່ສະໜອງທຶນໃຫ້ ຄມສ ເນື່ອງຈາກຄະນະກຳມາທິການດັ່ງກ່າວນີ້ ກຳລັງເລີ່ມຈັດຕັ້ງປະຕິບັດ ແຜນຍຸດທະສາດຂອງຕົນ ສຳລັບປີ 2021–2025 ຕາມທິດທາງປ່ຽນແປງໃໝ່ ເພື່ອເອົາຊະນະໄພອັນຕະລາຍຫຼາຍຢ່າງ ທີ່ອ່າງແມ່ນ້ຳແຫ່ງນີ້ ກຳລັງປະເຊີນໜ້າຢູ່.

"ການຊ່ວຍເຫຼືອນີ້ ມາຖືກເວລາ ແລະ ມີຄວາມສຳຄັນຫຼາຍ ສຳລັບ ຄມສ ໃນການຈັດຕັ້ງປະຕິບັດ ວຽກງານຕ່າງໆ ເພື່ອສ້າງຄວາມສົມດູນໃຫ້ ຄວາມຕ້ອງການທາງດ້ານ ການພັດທະນາເສດຖະກິດ, ການປັບປຸງສັງຄົມ ແລະ ການປົກປ້ອງສິ່ງແວດລ້ອມ", ກ່າວໂດຍ ຫົວໜ້າກອງເລຂາ ຄມສ ທ່ານ ດຣ. ອັນ ພິສ ຣັດດາ ໃນພິທີເຊັນສັນຍາ ເຊິ່ງໄດ້ຈັດຂຶ້ນໃນລະຫວ່າງ ກອງປະຊຸມບໍ່ເປັນທາງການ ຂອງບັນຄູ່ຮ່ວມພັດທະນາ ທີ່ນະຄອນຫຼວງວຽງຈັນ ໃນວັນພະຫັດນີ້.

ພາຍໃຕ້ແຜນຍຸດທະສາດໃໝ່ນີ້, ຄມສ ຈະຮັບປະກັນວ່າ ບັນດາແຜນການຜະລິດພະລັງງານ ລະດັບປະເທດ ສະບັບໃໝ່ໆນັ້ນ ໄດ້ພິຈາລະນາເຖິງ ແຫຼ່ງຊັບພະຍາກອນທີ່ມີຢູ່ຫຼາກຫຼາຍ ເຊິ່ງຮວມທັງ ແຫຼ່ງນ້ຳ-ອາຫານ-ພະລັງງານ ພ້ອມທັງການນຳໃຊ້ພະລັງງານເສີມ ຈາກພະລັງງານລົມ ແລະ ພະລັງງານແສງຕາເວັນ. ຄມສ ຈະສົ່ງເສີມ ບົດບາດຍິງ-ຊາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມ ໃນຂະແໜງການນ້ຳ.

ຄມສ ຍັງຈະສຶກສາ ວິທີທາງ ເຮັດແນວໃດເພື່ອໃຫ້ ການປະຕິບັດງານ ຂອງບັນດາໂຄງລ່າງພື້ນຖານທາງນ້ຳ ໃນທົ່ວທັງອ່າງແມ່ນ້ຳແຫ່ງນີ້ ມີການປະສານງານກັນ ເພື່ອຂະຫຍາຍຜົນປະໂຫຍດສູງສຸດ ແລະ ຈຳກັດຜົນກະທົບຮຸນແຮງດ້ານສິ່ງແວດລ້ອມ ຕໍ່ກັບລຳແມ່ນ້ຳຂອງ ແລະ ຕໍ່ກັບປະຊາຊົນ.

ຄມສ ຈະສືບຕໍ່ສົ່ງເສີມ ການສົນທະນາລະດັບພາກພື້ນ ລະຫວ່າງ ບັນດາປະເທດອ່າງນໍ້າ ແລະ ລົງເລິກການຮ່ວມມືກັບ ປະເທດຈີນ ພ້ອມທັງ ບັນດາຄູ່ຮ່ວມງານອື່ນໆທັງໝົດ ໃນອາຊຽນ ແລະ ການຮ່ວມມືແມ່ນໍ້າລ້ານຊ້າງ-ແມ່ນໍ້າຂອງ ເພື່ອ ຜົນປະໂຫຍດຂອງ ພາກສ່ວນທັງໝົດທີ່ກ່ຽວຂ້ອງກັບແມ່ນໍ້າຂອງ.

ສັນຍາໃຫ້ທຶນໃໝ່ຈາກປະເທດອົດສະຕຣາລີ ເຊິ່ງມີມູນຄ່າ 5,1 ລ້ານໂດລາອົດສະຕຣາລີ (ປະມານ 3,8 ລ້ານໂດລາ ສະຫະລັດ) ໄດ້ຮັບການລົງນາມໂດຍ ເອກອັກຄະລັດຖະທູດອົດສະຕຣາລີ ປະຈຳ ສປປ ລາວ ພະນັກທ່ານ ພໍ ເຄວລີ ແລະ ດຣ. ຣັດດາ. ການສະໜັບສະໜູນນີ້ ຈະກວມເອົາເວລາ 5 ປີ ແຕ່ປີ 2021 ເຖິງປີ 2025 ແລະ ມັນເປັນສ່ວນໜຶ່ງຂອງ ການຮ່ວມມືໃໝ່ ແມ່ນໍ້າຂອງ-ອົດສະຕຣາລີ.

"ພວກເຮົາຫວັງວ່າ ການໃຫ້ທຶນຊ່ວຍເຫຼືອໃນຄັ້ງນີ້ ຈະຊ່ວຍ ຄມສ ແລະ ບັນດາປະເທດສະມາຊິກຂອງຕົນ ໃຫ້ສາມາດນໍາ ໃຊ້ ນໍ້າ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ຂອງແມ່ນໍ້າຂອງແຫ່ງນີ້ ຢ່າງທົ່ວເຖິງ ແລະ ຍືນຍົງ ເພື່ອປະກອບສ່ວນໃຫ້ ການ ຟື້ນຟູເສດຖະກິດຈາກ ພະຍາດລະບາດ ພ້ອມທັງສ້າງຄວາມສາມາດໃນການປັບຕົວ ຂອງສິ່ງແວດລ້ອມ ແລະ ສ້າງຄວາມ ເຂັ້ມແຂງໃຫ້ ການຮ່ວມມືລະດັບພາກພື້ນ," ກ່າວໂດຍ ທ່ານເອກອັກຄະລັດຖະທູດ ເຄວລີ.

ທ່ານເອກອັກຄະລັດຖະທູດ ຍັງໄດ້ກ່າວເພີ່ມຕື່ມອີກວ່າ "ປະເທດອົດສະຕຣາລີ ຍັງໃຫ້ການສະໜັບສະໜູນເພີ່ມຕື່ມ ດ້ານ ວິຊາການ ໃຫ້ ຄມສ ກ່ຽວກັບ ຂົງເຂດວຽກງານສຳຄັນອື່ນໆ ເຊິ່ງຮວມທັງ ສູນຄຸ້ມຄອງໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ ຂອງ ຄມສ ແລະ ການຟື້ນຟູ ລະບົບຂໍ້ມູນ ແລະ ຂ່າວສານ ຂອງ ຄມສ.

ໃນເວລາດຽວກັນນັ້ນ, ເອກອັກຄະລັດຖະທູດເຢຍລະມັນ ປະຈຳ ສປປ ລາວ ພະນັກທານ ເຈັນ ລຸດເກນເຮີມ ໄດ້ຢັ້ງຢືນ ການປະກອບສ່ວນຂອງປະເທດເຢຍລະມັນ ເປັນຈຳນວນ 3 ລ້ານຢູໂຣ (ປະມານ 3,55 ລ້ານໂດລາສະຫະລັດ) ເພື່ອສະ ໜັບສະໜູນ ແຜນການສະບັບໃໝ່ນີ້. ທ່ານໄດ້ກ່າວວ່າ ທຶນດັ່ງກ່າວນີ້ ຈະກວມເອົາເວລາ 3 ປີ ເລີ້ມຈາກປີ 2022 ເຊິ່ງ ໃນນັ້ນ 1,2 ລ້ານໂດລາສະຫະລັດ ແມ່ນຈັດສັນໃຫ້ ກົນໄກສະໜອງທຶນ ຂອງ ຄມສ ແລະ ສ່ວນທີ່ເຫຼືອ ແມ່ນໄດ້ຈັດສັນ ໃຫ້ ແຜນງານຮ່ວມມື ຄມສ-ຈີໄອແຊັດ ສຳລັບການຊ່ວຍເຫຼືອທາງດ້ານວິຊາການ.

"ພວກເຮົາເຊື່ອວ່າ ທຶນດັ່ງກ່າວນີ້ ຈະຊ່ວຍ ຄມສ ສ້າງຕັ້ງ ຕາໜ່າງຕິດຕາມແມ່ນໍ້າ ໃນພາກພື້ນແມ່ນໍ້າຂອງ ເພື່ອ ປະກອບສ່ວນໃຫ້ ການຕັດສິນໃຈ ໃນການພັດທະນາ ແລະ ການຄຸ້ມຄອງ ຊັບພະຍາກອນນໍ້າ ແລະ ເພື່ອສົ່ງເສີມ ຄວາມ ສາມາດຂອງ ຄມສ ໃນການຄຸ້ມຄອງຄວາມສ່ຽງຕໍ່ ໄພນໍ້າຖ້ວມແລະໄພພິບັດ ໃຫ້ມີປະສິດທິພາບຫຼາຍຂຶ້ນ," ກ່າວໂດຍ ທ່ານເອກອັກຄະລັດຖະທູດ ລຸດເກນເຮີມ.

ທ່ານ ຊ່ອງຟຣອງຊົວ ກູເອໂນ, ຫົວໜ້າອົງການເພື່ອການພັດທະນາ ແລະ ການຮ່ວມມື ປະເທດສະວິດເຊີແລນ ປະຈຳພາກ ພື້ນ ໄດ້ໃຫ້ຄຳໝັ້ນສັນຍາ ວ່າຈະສະໜັບສະໜູນ ການຈັດຕັ້ງປະຕິບັດ ແຜນຍຸດທະສາດ ຄມສ ສະບັບໃໝ່ ມູນຄ່າ 5,3 ລ້ານໂດລາສະຫະລັດ ສຳລັບໄລຍະເວລາ 5 ປີຕໍ່ໄປນີ້.

"ພວກເຮົາຂໍຊົມເຊີຍ ຄມສ ທີ່ໄດ້ເປີດຕົວ ຍຸດທະສາດວິໄສທັດໃໝ່ໆ ເຊິ່ງມີຄວາມສຳຄັນຫຼາຍຕໍ່ກັບ ອ່າງແມ່ນໍ້າຂອງ," ກ່າວໂດຍທ່ານ ກູເອໂນ. "ພວກເຮົາຫວັງວ່າ ຈະໄດ້ຮ່ວມວຽກງານກັບ ຄມສ, ບັນດາປະເທດສະມາຊິກຂອງ ຄມສ ແລະ

ບັນດາຄູ່ຮ່ວມພັດທະນາອື່ນໆ ໃນການຫັນປ່ຽນພາກພື້ນນີ້ ໄປສູ່ເສັ້ນທາງທີ່ຍືນຍົງຫຼາຍຂຶ້ນ ແລະ ສາມາດປັບຕົວໄດ້ຫຼາຍຂຶ້ນ ພ້ອມທັງຮັບປະກັນວ່າ ບໍ່ມີໃຜ ຖືກປະປ່ອຍໄວ້ເບື້ອງຫຼັງ."

ທ່ານ ກູເອໂນ ຍັງໄດ້ກ່າວເພີ້ມຕື່ມອີກວ່າ "ປະເທດສະວິດເຊີແລນ ໄດ້ໃຫ້ການສະໜັບສະໜູນ ຄມສ ນັບຕັ້ງແຕ່ປີ 1995 ແລະ ເຊື່ອໝັ້ນວ່າ ຄມສ ເຮັດໜ້າທີ່ສຳຄັນ ໃນການຮ່ວມມືກ່ຽວກັບນ້ຳ ໃນພາກພື້ນແມ່ນ້ຳຂອງແຫ່ງນີ້."

ແຜນຍຸດທະສາດຂອງ ຄມສ ສຳລັບປີ 2021-2025 ແມ່ນເປັນເຄື່ອງມືສຳຄັນອັນໜຶ່ງ ເພື່ອຊ່ວຍຄະນະກຳມາທິການນີ້ ຈັດຕັ້ງປະຕິບັດ ຍຸດທະສາດພັດທະນາອ່າງນ້ຳ ສະບັບໃໝ່ ທີ່ກວມເວລາ 10 ປີ ເຊິ່ງເປັນຍຸດທະສາດ ສູ່ການຫັນປ່ຽນໃໝ່ ສຳລັບອ່າງແມ່ນ້ຳແຫ່ງນີ້. ເອກະສານທັງໝົດນັ້ນ ຈະຊ່ວຍບັນດາປະເທດແມ່ນ້ຳຂອງ ໃຫ້ສາມາດແກ້ໄຂ ບັນຫາທ້າທາຍ ໃນປະຈຸບັນ ແລະ ບັນຫາທ້າທາຍທີ່ເກີດຂຶ້ນໃໝ່ ພ້ອມທັງ ປັບປຸງສະພາບການລວມຂອງອ່າງແມ່ນ້ຳແຫ່ງນີ້ ໃນໄລຍະທົດສະວັດຕໍ່ໄປ.

**ຂໍ້ມູນສຳລັບບັນນາທິການຂ່າວ:**

ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງແມ່ນ້ຳຂອງຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນ້ຳຂອງ ລະຫວ່າງ ປະເທດກຳປູເຈຍ, ສປປ ລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳ ເພື່ອການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**- ຈົບ -**

**ຖ້າຕ້ອງການຂໍ້ມູນເພີ້ມຕື່ມ, ກະລຸນາຕິດຕໍ່:**

ທ່ານ ໂສພຽກ ແມ, ພະນັກງານປະຊາສຳພັນ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບມືຖື: +856-20-77779168

###